# ໂຮງຮຽນວັນອາທິດ

## ວັນອາທິດ ທີ 21 ກໍຣະກະດາ 2019 (07- 21 - 2019 )

## ຕິດຕາມຄວາມເຊື່ອສັດທາໃນພຣະເຈົ້າ

ມີສິ່ງໃດທີ່ທ່ານມີຄວາມຍິນດີທີ່ຈະປ່ອຍໄປຕາມທັມມະຊາດ?

**ຈຸດສຳຄັນໃນບົດຮຽນນີ້**: ເຮັດໃຫ້ພຣະເຈົ້າເປັນຈຸດສົນໃຈໃນຊີວິດຂອງທ່ານ.

**ພຣະຄັມພີຕອບສນອງຕໍ່ຊີວິດ**:

ທຸກໆວັນພວກເຮົາປະເຊີນໜ້າກັບຫຼາຍໆສິ່ງທີ່ເຮັດໃຫ້ຫວັ່ນໄຫວ. ໂປແກຣມໃນສະມາດໂຟນຂອງເຮົາເຮັດໃຫ້ເຮົາຫັນເຫອອກນອກປະເດັນໄດ້ຢ່າງງ່າຍໆ. ສື່ມວນຊົນ, ການສົ່ງຂໍ້ຄວາມ, ແລະອີແມວແລ້ວອີແມວອີກ ເພື່ອດຶງເອົາຄວາມສົນໃຈຂອງເຮົາ. ມີສິ່ງໃດອີກແດ່ທີ່ເຮັດໃຫ້ເປັນທີ່ກັງວົນໃຈທີ່ອາດຈະສ້າງບັນຫາໃຫ້ກັບການຕັ້ງໃຈໃສ່ກັບການທຳງານຂອງເຮົາ?

- ຄິດສະເລັ່ຽຄົນງານເສັຽເວລາໄປໂດຍເປົ່າປໂຍດ 759 ຊົ່ວໂມງໃນແຕ່ລະປີໃນການຫັນໄປສົນໃຈສິ່ງອື່ນໃນເວລາທຳງານ.
- ໃນປີ 2015, 3,477 ຄົນໄດ້ຕາຍແລະເກືອບ 400,000 ຄົນຖືກບາດເຈັບໃນການເກີດອຸປະຕິເຫດຣົດຕຳກັນໃນການເດີນທາງໄກ.
- ເກົ້າສິບສອງເປີເຊັນນັກສຶກສາມະຫາວິທະຍາລັຍໃຊ້ໂທຣະສັບສົ່ງຂໍ້ຄວາມໃນເວລາຮຽນໜັງສືໃນຫ້ອງຮຽນ.

ມີສິ່ງກວນໃຈອັນໃດອີກແດ່ທີ່ກໍ່ໃຫ້ເກີດອັນຕະລາຍ, ແຕ່ການຍຶດຕິດຢູ່ກັບສິ່ງທີ່ກຸກກວນຈິດໃຈອັນໃດກໍຕາມທີ່ເກີດຂຶ້ນໃນຊີວິດສາມາດທຳລາຍຕຳແໜ່ງໜ້າທີ່ ທີ່ສຳຄັນໄດ້. ໃນພຣະທັມ 2 ຂ່າວຄາວ, ພວກເຮົາຈະເຫັນຊາຍຄົນນຶ່ງຜູ້ທີ່ມີຄວາມຕັ້ງໃຈ. ກະສັດອາຊາເຮັດໃຫ້ລາວເອງແນ່ໃຈວ່າບໍ່ມີສິ່ງໃດຫັນເຫລາວໄປຈາກຄວາມຕັ້ງໃຈໃສ່ພຣະເຈົ້າ.

**ພຣະຄັມພີກ່າວວ່າຢ່າງໃດ?** ( ເບິ່ງຕາມຫົວຂໍ້ 1, 2 ແລະ 3 )

### ສຶກສາພຣະຄັມພີ

### 1. <u>2 ຂ່າວຄາວ 14: 1-2</u>

*1 ອາບີຢາຈຶ່ງລ່ວງລັບໄປຢູ່ກັບບັນພະບຣຸດຂອງພຣະອົງ ພວກເຂົາກໍຝັງພຣະສົບໄວ້ໃນນະຄອນດາວິດ ແລະອາຊາລູກ*
*ຊາຍຂອງພຣະອົງໄດ້ຂຶ້ນປົກຄອງແທນພຣະອົງ ໃນຣາຊການຂອງອາຊາແຜ່ນດິນໄດ້ສງົບຢູ່ສິບປີ 2 ແລະອາຊາຊົງກະ*
*ທຳສິ່ງທີ່ດີ ແລະເປັນທີ່ຊອບໃນສາຍພຣະເນດພຣະຜູ້ເປັນເຈົ້າ ພຣະເຈົ້າຂອງພຣະອົງ.*

ເມື່ອປະທານາທິບໍດີໃໝ່ຮັບຕຳແໜ່ງ, ພວກເຮົາຕັ້ງໃຈຈົດຈໍ່ເບິ່ງຢ່າງບໍ່ລະສາຍຕາວ່າລາວຈະເຮັດຫຽັງໃນຮ້ອຍວັນທຳອິດ. ມີການເຄື່ອນໄຫວນອກເໜືອຈາກຄຳໝັ້ນສັນຍາໃນເວລາຫາສຽງບໍ່, ເຮົາໄດ້ເລີ້ມເຫັນຄວາມສາມາດແລະທ່າທາງໃນການປະພຶດຂອງລາວ. ໃນຮ້ອຍວັນແລກເປັນການຈັດວາງຄຸນນະພາບສຳລັບການບໍຣິຫານຂອງລາວ.

ອາຊາຖືກຜັກດັນໃຫ້ເປັນຜູ້ນຳແບບກະທັນຫັນເພາະບິດາຂອງລາວຕາຍ. ບາງທີຊົນຊາດຂອງຢູດາໄດ້ຕັ້ງຕາທີ່ຈະເບິ່ງ, ໃນຄວາມຄິດ ວ່າຈະເປັນໄປຢ່າງໃດໃນຮ້ອຍວັນແລກຂອງລາວ. ຕົວອາຊາເອງອາດກັງວົນໃຈວ່າເປັນກະສັດ

ແບບໃດທີ່ລາວຄວນຈະເປັນ. ພວກເຮົາບໍ່ຮູ້ວ່າລາວມີອາຍຸເທົ່າໃດເມື່ອລາວຂຶ້ນມາເປັນກະສັດ. ແຕ່ທ່ານໄດ້ສັງເກດເຫັນວ່າບິດາຂອງລາວໄດ້ເຮັດຢ່າງໃດ. ອາບີຢາເປັນກະສັດປົກຄອງພຽງແຕ່ເວລາສາມປີ.(1 ກະສັດ 15:2), ດັ່ງນັ້ນອາຊາຍັງໄດ້ຕົວຢ່າງມາຈາກພໍ່ຂອງພໍ່ລາວ, ເຣໂຮໂບອາມ.

ອາຊາສັງເກດເຫັນວ່າທັງສອງຄົນໄດ້ຕອບສນອງຕໍ່ຄວາມທ້າທາຍໃນການເປັນຜູ້ນໍາຢ່າງໃດ. ທັງສອງຄົນໄດ້ຕໍ່ສູ້ກັບສົງຄາມແລະການຂັດແຍ້ງ, ແລະທັງສອງຄົນແມ່ນລົ້ມເຫຼວໃນການເອົາໃຈໃສ່ໃນພຣະເຈົ້າ ແລະເຮັດອັນໃດທີ່ເຫັນວ່າຖືກຕ້ອງໃນການມອງເຫັນ. ມາເຖິງຈຸດນີ້, ປະຊາຊົນ ປະເທດຊາດບ້ານເມືອງບໍ່ມີຄວາມສງົບສຸກ, ເຖິງແມ່ນວ່າອາບີຢາໄດ້ປົກຄອງນໍາພາອານາຈັກພາກໃຕ້ຂອງຢູດາເອົາຊະນະອານາຈັກພາກເໜືອຂອງອິສຣາເອນ ທີ່ໄດ້ຫ່າງເຫີນອອກຈາກເສັ້ນທາງຂອງພຣະເຈົ້າທີ່ຢູ່ພາຍໃຕ້ການປົກຄອງກະສັດເຣໂຮໂບອາມ. ເມື່ອອາຊາຂຶ້ນຮັບໜ້າທີ່ການປົກຄອງ, ປະເທດຊາດມີຄວາມສງົບ ແລະມີຄວາມສງົບພຽງແຕ່ສິບປີ. ແຕ່ກະສັດຈະຕ້ອງເພັ່ງຄວາມສົນໃຈຂອງລາວໃນເວລາມີຄວາມສງົບທີ່ລາວຫາກໍເຮັດສໍາເຣັດ. ເວລາສງົບຜູ້ເປັນຜູ້ນໍາຍັງສືບຕໍ່ບອກຂ່າວຄວາມຮັບຜິດຊອບອັນຍິ່ງໃຫຍ່.

ຍັງມີຄໍາຖາມ: ອາຊາຄວນຈະນໍາພາຄືເຫຼົ່າກະສັດທີ່ປົກຄອງກ່ອນລາວບໍ່ຫຼືລາວຈະເລືອກເອົາທາງທີ່ເຫັນວ່າດີ? ອາຊາບໍ່ໄດ້ເບິ່ງກັບຄືນໄປໄກໃນປະວັດສາດວ່າມີຫຍັງເກີດຂຶ້ນ ເມື່ອຜູ້ນໍາອວ່າຍຄວາມສົນໃຈຂອງຕົນອອກຈາກພຣະເຈົ້າ. ອາຊາເລືອກເສັ້ນທາງທີ່ແຕກຕ່າງ: ລາວເລືອກທີ່ຈະຮັກສາຄວາມສັມພັນຂອງລາວກັບພຣະເຈົ້າເປັນອັນດັບນຶ່ງ ອາຊາອາດຈະເອົາແບບຢ່າງການນໍາຕົວຢ່າງທັງສອງໃນການປະພຶດຕໍ່ໜ້າປະຊາຊົນແລະໃນຄວາມສັມພັນຂອງລາວກັບພຣະເຈົ້າ. ລາວຈະຕ້ອງໄວ້ວາງໃຈພຣະເຈົ້າແລະການຄວບຄຸມດູແລຂອງພຣະອົງ. ເມື່ອລາວວາງໃຈໃນອົງພຣະຜູ້ເປັນເຈົ້າໃຫ້ນໍາພາການປະພຶດແລະຄວາມຄິດຂອງລາວ, ລາວຈະນໍາພາປະຊາຊົນໃຫ້ຕິດຕາມທິດທາງທີ່ພຣະເຈົ້າປະທານໃຫ້. ກະສັດອາຊາຈະເຮັດທັງໝົດນີ້ຢ່າງໃດ? ລາວຈະຕ້ອງເຂົ້າໃຈທຸກໆການຕັດສິນໃຈໃນຖານະກະສັດໃນວິທີທາງທີ່ຖືກຕ້ອງເໝາະສົມບໍ່ວ່າສະຖານະການຫຼືສະພາບການໃດເກີດຂຶ້ນ. " ອາຊາເຮັດໃນສິ່ງທີ່ດີແລະຖືກຕ້ອງໃນການມອງເຫັນອົງພຣະຜູ້ເປັນເຈົ້າພຣະເຈົ້າຂອງລາວ." ແມ່ນຫຍັງເຮັດໃຫ້ການປົກຄອງຂອງລາວເປັນໜ້າສັງເກດໄດ້ວ່າສິ່ງທີ່ລາວເຮັດນັ້ນເປັນການດີແລະຖືກຕ້ອງໃນສາຍຕາຂອງພຣະເຈົ້າ. ຊຶ່ງເປັນຄວາມພະຍານທີ່ພວກເຮົາຜູ້ເປັນ "ປະຊາຊົນທີ່ພໍໃຈ," ເຮັດອັນໃດທີ່ຄົນອື່ນເຫັນວ່າດີແລະຖືກຕ້ອງ. ຄົນສ່ວນຫຼາຍຕ້ອງການໃຫ້ພວກເຮົາເຮັດການດີ ແລະຖືກຕ້ອງສໍາລັບເຂົາ. ແຕ່ຫຼາຍໄປກວ່າການເຮັດໃຫ້ຖືກໃຈຕົວເອງ, ແລະແມ່ນຫຍັງແມ່ນ "ການດີແລະການຖືກຕ້ອງ" ທີ່ສາມາດໄປໄດ້ກັບທຸກໆສະຖານະການເມື່ອບໍ່ຢູ່ໃນສາຍຕາຂອງພຣະເຈົ້າ. ມາດຕະຖານຂອງພຣະເຈົ້າສໍາລັບການດີແລະຄວາມຖືກຕ້ອງບໍ່ມີການປ່ຽນແປງ. ອາຊາບໍ່ໄດ້ເຮັດດີແລະຖືກຕ້ອງເພື່ອໃຫ້ຖືກໃຈປວງຊົນໃນການປົກຄອງຂອງລາວ; ລາວໄດ້ເຮັດການດີແລະສິ່ງທີ່ຖືກຕ້ອງເພື່ອເປັນທີ່ພໍພຣະທັຍພຣະເຈົ້າ..

## 2. <u>2 ຂ່າວຄາວ 14: 3-5</u>

*3 ພຣະອົງຊົງກໍາຈັດແທ່ນບູຊາພຣະຕ່າງດ້າວແລະບ່ອນນະມັສການສະຖານທີ່ສູງທັງຫລາຍ ແລະພັງເສົາສັກສິດລົງ ແລະໄດ້ໂຄ່ນອາເຊຣາລົງເສັຽ 4 ແລະຊົງບັນຊາໃຫ້ຢູດາສແວງຫາພຣະຜູ້ເປັນເຈົ້າພຣະເຈົ້າແຫ່ງບັນພະບຸຣຸດຂອງຕົນ ແລະໃຫ້ຮັກສາພຣະທັມແລະພຣະບັນຍັດ 5 ພຣະອົງຊົງກໍາຈັດບ່ອນນະມັສການສະຖານທີ່ສູງແລະແທ່ນເຄື່ອງຫອມອອກເສັຽຈາກທົ່ວເມືອງທັງສິ້ນຂອງຢູດາດ້ວຍ ແລະຣາຊອານາຈັກກໍໄດ້ສງົບຢູ່ພາຍໃຕ້ພຣະອົງ.*

ທັນທີທີ່ອາຊາຂຶ້ນເປັນກະສັດ, ລາວບໍ່ໄດ້ຊັກຊ້າລໍເວລາໃນການເຄື່ອນໄຫວການທໍາງານທີ່ຈະເຮັດສິ່ງທີ່ຕ້ອງການເຮັດໃຫ້ສໍາເຣັດ. ຈຸດສໍາຄັນທີ່ຕ້ອງເຮັດກ່ອນອື່ນໝົດແມ່ນທັນຄວາມສົນໃຂຂອງປະຊາກອນໃຫ້ກັບມາຫາພຣະເຈົ້າ. ແທ່ນບູຊາມີຢູ່ທົ່ວທຸກທົບທຸກແຫ່ງໃນແຜ່ນດິນ, ແຕ່ເປັນແທ່ນບູຊາຖວາຍຄວາມໂຄຣົບທີ່ບໍ່ຖືກຕ້ອງ. ເປັນເວລາຫຼາຍປີ, ຜູ້ມີອໍານາດເຫຼົ່ານັ້ນປ່ອຍໃຫ້ການນະມັສການທີ່ບໍ່ມີເປົ້າໝາຍຕໍ່ພຣະປອມເຫຼົ່ານັ້ນ ທີ່ກໍ່ໃຫ້ເກີດຄວາມບໍ່ສງົບໃນບ້ານ

ເມືອງ. ບິດາຂອງອາຊາ, ອາບີຢາ, ບໍ່ໄດ້ເຮັດສິ່ງໃດເພື່ອຢຸດຄວາມບາບຂອງຊົນຊາດນີ້. ປະຕິເສດທີ່ຈະຢືນຂຶ້ນຕໍ່ຕ້ານການຫຼິ້ງໄຫຼຢ່າງທີ່ບໍ່ມີນຫູມີນຕາ ເຊື່ອຖື ສິ່ງເສີມເຮັດຕາມຫຼັກສາສນາ. ບໍ່ສົມຄວນຖ້າອາບີຢາຍັງສິ່ງເສີມໃນການບູຊາຮູບໂຄຣົບ, ແຕ່ " ລາວບໍ່ເຕັມໃຈມອບການນະມັສການໃຫ້ກັບອົງພຣະຜູ້ເປັນເຈົ້າເປັນພຣະເຈົ້າຂອງລາວ" ( 1 ກະສັດ 15: 3).

ເຖິງຢ່າງໃດກໍຕາມ, ອາຊາ, ໄດ້ຕັດສິນໃຈຢ່າງແນ່ວແນ່ວ່າ ອັນໃດກໍຕາມລາວຈະເຮັດໃຫ້ເປັນທີ່ພໍພຣະທັຍໃນສາຍຕາພຣະເຈົ້າແລະລາວຕ້ອງທຳລາຍສະຖານທີ່ບູຊາຮູບໂຄຣົບ. ແລະລາວບໍ່ພຽງແຕ່ທຳລາຍບາງສ່ວນເທົ່ານັ້ນ ແຕ່ລາວຮື້ຖິ້ມສະຖານທີ່ນະມັສການບູຊາຮູບໂຄຣົບທັງໝົດ "ຈາກທັງໝົດຂອງອານາຈັກຢູດາ" ( ຂໍ້ 5). ທັງໝົດຂອງດິນແດນທີ່ລາວປົກຄອງແມ່ນເປັນທີ່ຍອມຮັບແລະນະມັສການພຣະເຈົ້າ.

ອາຊາຕັດສິນໃຈນຳເອົາຊົນຊາດກັບມາຫາພຣະເຈົ້າ. ລາວໃຊ້ສິດອຳນາດໃນຖານະກະສັດ ເຕືອນປະຊາຊົນໃຫ້ສແວງຫາພຣະເຈົ້າຂອງບັນພະບຸຣຸດຂອງເຂົາ. ພວກເຮົາບໍ່ຮູ້ວ່າປະຊາຊົນເຫລົ່ານີ້ໄດ້ຄັດຄ້ານການທຳລາຍພຣະທຽມເຫລົ່ານີ້ຫລືບໍ່, ແຕ່ແນ່ນອນພວກເຂົາຍອມເຊື່ອຟັງແລະເດີນໄປຂ້າງໜ້າ.

ດ້ວຍເຫດຜົນການກະທຳຂອງອາຊາ, ປະເທດຊາດມີຄວາມເປັນຢູ່ໃນຄວາມສງົບສຸກເປັນເວລາສິບປີ. ລອງວາດພາບເບິ່ງການສິ່ງຜົນສະທ້ອນທີ່ພວກເຮົາຈະໄດ້ຮັບໃນທຸກວັນນີ້ຖ້າພວກເຮົາສແວງຫາພຣະເຈົ້າດ້ວຍຄວາມປາຖນາຢ່າງດຽວກັນແລະຕັດສິນໃຈມຸ້ງໝັ້ນຢ່າງດຽວກັນກັບທີ່ອາຊາເຮັດ. ການເຊື່ອຖືພຣະເຈົ້າຂອງເຮົາອາດມີການປ່ຽນແປງ, ແຕ່ພວກເຮົາຈະຕ້ອງເຮັດໃຫ້ຄວາມສິນໃຈໃນອົງພຣະຜູ້ເປັນເຈົ້າຂອງເຮົາ ເບິ່ງເຫັນໃນທຸກໆບຸກຄະລິກລັກສະນະໃນການດຳລົງຊີວິດຂອງພວກເຮົາ.

### 3. <u>2 ຂ່າວຄາວ 14: 6- 8</u>

*[6]ພຣະອົງຊົງສ້າງຫົວເມືອງທີ່ມີປ້ອມໃນຢູດາ ເພາະແຜ່ນດິນກໍສງົບ ພຣະອົງບໍ່ໄດ້ເຮັດສົງຄາມໃນປີເຫຼົ່ານັ້ນ ເພາະພຣະຜູ້ເປັນເຈົ້າຊົງປະທານຄວາມສງົບແກ່ພຣະອົງ [7]ແລະພຣະອົງກ່າວກັບຢູດາວ່າ "ໃຫ້ເຮົາທັງຫລາຍສ້າງຫົວເມືອງເຫລົ່ານີ້ ອ້ອມດ້ວຍກຳແພງ ຫໍຄອຍ ປະຕູເມືອງ ແລະດ່ານ ແຜ່ນດິນຍັງເປັນຂອງເຮົາ ເພາະເຮົາໄດ້ສແວງຫາພຣະຜູ້ເປັນເຈົ້າພຣະເຈົ້າຂອງເຮົາ ເຮົາໄດ້ສແວງຫາພະອົງ ແລະພຣະອົງໄດ້ຊົງປະທານຄວາມສງົບສຸກທຸກດ້ານ" ພວກເຂົາທັງຫລາຍຈຶ່ງສ້າງສາ ແລະຈະເຣີນຂຶ້ນ.[8]ອາຊາຊົງມີກອງທັບດ້ວຍໂລ່ໃຫຍ່ ແລະຫອກຈາກຢູດາສາມແສນຄົນ ແລະຈາກເບັນຢາມິນຊຶ່ງຖືໂລ່ແລະທະນູສອງແສນແປດໝື່ນຄົນ ທັງໝົດເປັນທະຫານເອກ.*

ເຖິງແມ່ນວ່າຕລອດທົ່ວທັງແຜ່ນດິນມີປະສົບການກັບຊ່ວງເວລາອັນດີຂອງຄວາມສງົບສຸກ, ອາຊາບໍ່ໄດ້ປ່ອຍໃຫ້ເວລານັ້ນຫັນເຫໄປທາງອື່ນ ໄປທ່ຽວຫຼີ້ນອນຫລັບສະບາຍພາຍໃຕ້ຕົ້ນໂອລິຟທີ່ຢູ່ໃກ້ໆແຖວນັ້ນ. ແຕ່ລາວເຝົ້າຮັກສາຄວາມສົນໃຈຂອງລາວໃສ່ກັບການເຮັດອັນໃດທີ່ເປັນການດີແລະອັນໃດເປັນການຖືກຕ້ອງ. ລາວໄດ້ຮ່ວມຊຸມນຸມກັບປະຊາຊົນບອກເຂົາໃຫ້ມອງເບິ່ງໄປໃນວັນຂ້າງໜ້າ ເມື່ອເວລານັ້ນບໍ່ມີຄວາມສງົບສຸກ ແລະພັຍອັນຕະລາຍຈາກການໂຈມຕີຂອງສັດຕຣູ. ເມື່ອພຣະເຈົ້າໃຫ້ມີເວລາສງົບສຸກ, ພວກເຮົາມັກຈະກັບໄປນັ່ງແລະພັກຜ່ອນຢ່າງສະບາຍ. ພວກເຮົາຈະຕ້ອງເຝົ້າປ້ອງກັນຕົວເຮົາເອງຕໍ່ສູ້ກັບການລໍ້ລວງທີ່ຈະດຶງເອົາຄວາມສົນໃຈ ແລະຄວາມຕັ້ງໃຈຂອງເຮົາອອກຈາກພຣະເຈົ້າ, ເຖິງຢ່າງໃດກໍຕາມ, ພວກເຮົາຈະຕ້ອງສແວງຫາການຕິດຕາມພຣະຄຣິດ. ຂອບພຣະຄຸນພຣະເຈົ້າທີ່ຊົງປະທານຫຼາຍໆສິ່ງໃຫ້ເຮົາ ເພື່ອຊ່ວຍໃຫ້ພວກເຮົາຢືນຂຶ້ນຢ່າງເຂັ້ມແຂງແລະຕັ້ງໝັ້ນຄົງຢູ່.

**ໂບດວິຫານ.** ຮ່າງກາຍຂອງພຣະຄຣິດ ອ້າຍແລະເອື້ອຍນ້ອງຂອງພວກເຮົາໃນພຣະຄຣິດ ເປັນຕົ້ນພລັງຄວາມເຂັ້ມແຂງທີ່ບໍ່ໜ້າເຊື່ອ, ບໍ່ແມ່ນພຽງແຕ່ເວລາມີຄວາມສງົບສຸກ, ແຕ່ໂດຍສະເພາະແລ້ວໃນເວລາຂອງຄວາມໝົດກຳລັງໃຈແລະໄດ້ຮັບການໂຈມຕີຈາກສັດຕຣູ.

**ພຣະວິນຍານທີ່ຊົງປະທານ.** ພຣະເຈົ້າຊົງປະທານພຣະວິນຍານບໍຣິສຸດແກ່ຜູ້ເຊື່ອທຸກຄົນແລະພຣະອົງຄາດຫວັງວ່າພວກເຮົາຈະໃຊ້ຂອງພຣະຣາຊທານນີ້. ເມື່ອພວກເຮົາ "ໃຊ້ກຳລັງຂອງກ້າມເນື້ອເຫຼົ່ານັ້ນ" ໂດຍໃຊ້ຂອງປະທານທີ່ພຣະອົງຊົງປະທານໃຫ້ເຮົາ, ພວກເຮົາກໍເຂັ້ມແຂງຂຶ້ນ ແລະພວກເຮົາເຮັດໃຫ້ຄົນອື່ນເຂັ້ມແຂງຂຶ້ນດ້ວຍ. ແມ້ກະທັ້ງຊ່ວຍຄົນອື່ນໃຫ້ຢືນຂຶ້ນ, ພວກເຮົາຊ່ວຍເຂົາເຈົ້າໃຫ້ຢືນຂຶ້ນ.

ພວກເຮົາຢືນຂຶ້ນດ້ວຍຄວາມເຂັ້ມແຂງແລະຕັ້ງຄວາມສົນໃຈຂອງເຮົາໃສ່ໃນພຣະຄຣິດເມື່ອພວກເຮົາຢືນຂຶ້ນດ້ວຍກັນ ຍອມໃຫ້ພຣະເຈົ້າໃຊ້ທ່ານໃນຊີວິດຂອງຜູ້ທີ່ເຊື່ອອື່ນໆ ເຖິງວ່າທ່ານປາຖນາໃຫ້ພຣະເຈົ້າເຮັດໃຫ້ທ່ານເຂັ້ມແຂງຂຶ້ນຜ່ານທາງຂອງພຣະຣາຊທານແລະການຮັບໃຊ້ຄົນອື່ນ

## ນຳໃຊ້ໃນຊີວິດ

ທ່ານຈະຕິດຕາມຄວາມເຊື່ອສັດທາໃນພຣະເຈົ້າຢ່າງໃດໃນອາທິດນີ້ແລະຊອກຫາທີ່ຈະເຮັດອັນໃດທີ່ເປັນການດີ ແລະອັນໃດທີ່ເປັນການຖືກຕ້ອງຕໍ່ພຣະພັກພຣະເຈົ້າ? ສຳຣວດເບິ່ງການປະຕິບັດຕາມແບບຢ່າງຂ້າງລຸ່ມນີ້.

- **ທ່ອງຈຳ.** ໃຫ້ຄຳໝັ້ນສັນຍາທີ່ຈະທ່ອງຈຳ ພຣະທັມມັດທາຍ 6:33: " ແຕ່ກ່ອນອື່ນ ທ່ານທັງຫຼາຍຈົ່ງສແວງຫາຣາຊອານາຈັກຂອງພຣະເຈົ້າ ແລະຄວາມຊອບທັມຂອງພຣະອົງແລະພຣະອົງຈະຊົງເພີ້ມເຕີມສິ່ງທັງປວງເຫຼົ່ານີ້ໃຫ້ແກ່ທ່ານ"ຍອມໃຫ້ຄວາມຈິງພຣະຄຳຂໍ້ນີ້ຊຶມຊວ່ານເຂົ້າໃນໃຈຂອງທ່ານແລະຄວາມຄິດຂອງທ່ານ; ປ່ອຍໃຫ້ພຣະຄຳຂັບເຄື່ອນໃນການຕິດຕາມຄວາມເຊື່ອສັດທາພຣະເຈົ້າຂອງທ່ານ.

- **ຈົດບັນທຶກເປັນລາຍການ.** ບົ່ງບອກຊື່ແງ່ມູມໃນຊີວິດຂອງທ່ານທີ່ໃຫ້ຄວາມໂຄຣົບບູຊາສິ່ງສັກສິດແລະພຣະທຽມ. ບຸກເບີກແບບແຜນຢ່າງຈິງຈັງທີ່ຈະຈັດການຕົວເອງອອກຈາກສິ່ງເຫຼົ້ານີ້. ຂໍຄວາມກ້າຫານຊ່ວຍເຫຼືອຕໍ່ສູ້ຖ້າຫາກຈຳເປັນ.

- **ຟື້ນຟູ.** ຂໍຄວາມຊ່ວຍເຫຼືອຄົນກຸ່ມນ້ອຍເພື່ອຊ່ວຍເຫຼືອ ເໝືອນເປັນທະຫານຜູ້ກ້າຫານຂອງທ່ານຜູ້ທີ່ຈະຢືນຂຶ້ນປົກປ້ອງທ່ານເມື່ອຖືກໂຈມຕີຈາກສັດຕຣູ.

ການຕິດຕາມຄວາມເຊື່ອສັດທາໃນພຣະເຈົ້າບໍ່ແມ່ນເຣື່ອງ່າຍທີ່ເຮັດຢູ່ໃນແຕ່ລະວັນໃນໂລກນີ້. ແຕ່ກໍເປັນໄປໄດ້ເມື່ອເຮົາຫຼີກຈາກສິ່ງທີ່ເຮັດໃຫ້ເຮົາໄຂວ່ເຂແລະກີດກັນຄວາມຕັ້ງໃຈທີ່ຈະມຸ້ງໄປທີ່ພຣະຄຣິດ.

**ອຸປຖັມໂດຍລາວຊາວເທີນບັບຕິດສັມພັນ www.lsbf.org ແປໂດຍ VR.**